## ການຮ້ອງຮຽນກ່ຽວກັບການເລືອກປະຕິບັດ

ຖ້າທ່ານຄິດວ່າທ່ານຖືກເລືອກປະຕິບັດ ທ່ານສາມາດຍື່ນຄຳຮ້ອງຮຽນ. ບອນທີ່ທານຍື່ນຄຳຮອງຮຽນແມ່ນຂື້ນກັບວາທານຮອງຮຽນກ່ຽວກັບໂຄງການໃດ.

**ສຳລັບໂຄງການທັງໝົດໃນຄາວຕີ້ຂອງທ່ານ**

**ເຈົ້າໜ້າທີ່ບໍລິຫານຄາວຕີ້:** ສອບຖາມຫ້ອງການຄາວຕີ້ຂອງທານເພື່ອຂໍຊື່, ທີ່ຢູແລະເບີໂທລະສັບຂອງເຈົ້າໜາທີ່ປະສານງານດານສິດທິພົນລະເມືອງ. ທາງຄາວຕີ້ຈະສືບສວນການຮອງຮຽນຂອງທານຢາງອິດສະຫຼະ.

**ສຳລັບໜ່ວຍງານພາຍໃຕ້ຄວາມຄຸ້ມຄອງໃນລັດຄາລິຟໍເນຍ:**

ເຈົ້າໜ້າທີ່ປະສານງານດ້ານສິດທິພົນລະເມືອງພາຍໃຕ້ຄວາມຄຸມຄອງໃນລັດຄາລິຟໍເນຍ
PO Box 989725
West Sacramento, CA 95789
(916) 228-8764
CivilRights@covered.ca.gov

**ສຳລັບໂຄງການເມດິ-ແຄລ ແລະເມດິ-ແຄລທັນຕະກຳ:**

ທ່ານສາມາດຕິດຕໍ່ກັບເຈົ້າໜ້າທີ່ປະສານງານດ້ານສິດທິພົນລະເມືອງຂອງຄາວຕີ້ ຫອງການບໍລິການສຸຂະພາບຂອງລັດ ຫຼືຫອງການບໍລິການສຸຂະພາບແລະມະນຸດຂອງລັດຖະບານກາງງ

Department of Health Care Services,
Office of Civil Rights
P.O. Box 997413, MS 0009
Sacramento, CA 95899-7413
(916) 440-7370 or 711 (Calif. Relay Service)
CivilRights@dhcs.ca.gov

**ສຳລັບໂຄງການອື່ນທັງໝົດຂອງລັດພາຍໃຕ້ຄວາມຄຸ້ມຄອງໃນແຜນພັບນີ້:ງ**

Civil Rights Unit
California Department of Social Services
P.O. Box 944243, M/S 8-16-70
Sacramento, CA 94244-2430
(866) 741-6241 (toll free)
crb@dss.ca.gov

**ຍື່ນຄຳຮ້ອງຮຽນກ່ຽວກັບແຄລເຟຣຊຕໍ່ໜ່ວຍງານຂອງລັດຖະບານກາງ:**

United States Department of Agriculture Director,
Office of Adjudication
1400 Independence Avenue, S.W.
Washington, D.C. 20250-9410
(866) 632-9992 (toll free) or (202) 260-1026
(800) 877-8339 (hearing impaired)
program.intake@usda.gov

**ການຍື່ນຄຳຮ້ອງຕໍ່ໜ່ວຍງານຂອງລັດຖະບານກາງ:**

ສຳລັບການຮອງຮຽນກ່ຽວກັບເຊື້ອຊາດ, ສີຜິວ, ຊາດກຳເນີດ, ຄວາມພິການ, ອາຍຸ, ຫຼືເພດເທົ່ານັ້ນ:

Centralized Case Management Operation
US Dept. Health and Human Services
200 Independence Ave.,
S.W. Room 509F HHH Bldg.
Washington DC, 20201

ຍື່ນຄຳຮ້ອງທຸກຜ່ານທາງອອນລາຍທີ່:

ຫ້ອງການສິດທິພົນລະເມືອງປະຈຳຫ້ອງການບໍລິການສຸຂະພາບແລະມະນຸດ ພອທັນສຳລັບການຮອງຮຽນ

(800) 368-1019 (ໂທຟຣີ)
(800) 537-7697 (ສຳລັບຜູ້ບົກຜ່ອງທາງການໄດ້ຍິນ / ການປາກເວົ້າ)

**ກຳນົດເວລາໃນການຮ້ອງຮຽນເລື່ອງການເລືອກປະຕິບັດ**

ທ່ານຕ້ອງຍື່ນຄຳຮ້ອງຮຽນເລື່ອງການເລືອກປະຕິບັດພາຍໃນ 180 ມື້ອວັນນັບຈາກວັນທີທີ່ທານຖືກເລືອກປະຕິບັດ.

ຖ້າການເລືອກປະຕິບັດສິ່ງຜົນກະທົບຕໍ່ລະດັບໃນການໄດຮັບສິດປະໂຫຍດແລະການບໍລິການຂອງທານເຊັ່ນກັນ,ກະລຸນາຮອງຂໍໃຫມີການໄຕສວນ.

> ການສືບສວນການເລືອກປະຕິບັດບໍ່ສາມາດປ່ຽນລະດັບການໄດຮັບສິດປະໂຫຍດຫຼືການບໍລິການຂອງທານໄດ. ມີແຕການໄຕສວນຂອງລັດເທົ່ານັ້ນທີ່ສາມາດປ່ຽນໄດ.

ທ່ານມີເວລາ 90 ມື້ອນັບຈາກວັນທີ່ໄດ້ຮັບແຈ້ງການກ່ຽວກັບສິດປະໂຫຍດເພື່ອຂໍໃຫມີການໄຕສວນ ຖາທານຍື່ນຂໍພາຍຫຼັງຈາກນັ້ນຜູພິພາກສາຈະຕັດສິນວາທານມີສິດທີ່ຈະໄດຮັບການໄຕສວນຫຼືບໍ.

**ໂຄງການທີ່ໄດ້ຮັບຄວາມຄຸ້ມຄອງພາຍໃຕ້ແຜ່ນພັບນີ້**

- ໂຄງການຊ່ວຍເຫຼືອການຮັບລ້ຽງລູກບຸນທຳ (AAP)
- ໂຄງການແອກໍຮໍແລະສານເສບຕິດ
- ໂຄງການຊວຍເຫຼືອດານອາຫານຂອງລັດແຄລິຟໍເນຍ
- ແຄລເວີກ (CalWORKs)
- ໂຄງການຊວຍເຫຼືອດານເງິນສົດແກ່ຄົນອົບພະຍົບ
- ແຄລເຟຣຊ ຫຼືບັດອາຫານ (Food Stamps)
- ໂຄງການປະກັນສຸຂະພາບເດັກນອຍ (CHIP)
- ສິດພາຍໄຕຄວາມຄຸມຄອງຂອງລັດແຄລິຟໍເນຍ
- ບໍລິການກ່ຽວກັບການອຸປະຖຳ/ສະຫວັດດີການເດັກ
- ໂຄງການທີ່ພັກອາໄສຜານພະແນກບໍລິການສັງຄົມຂອງຄາວຕີ້
- ການບໍລິການສະໜັບສະໜູນພາຍໃນເຮືອນ
- ຄວາມຊວຍເຫຼືອດານການຄຸມຄອງຍາດພີ່ນອງ
- ໂຄງການເມດິ-ແຄລ ແລະເມດິ-ແຄລທັນຕະກຳ
- ຄວາມຊວຍເຫຼືອດານເງິນສົດແກຜູລີ້ໄພ
- ການອະນຸມັດຊັບພະຍາກອນສຳລັບຄອບຄົວ (RFA)
- ໂຄງການຈັດຫາເງິນທຶນດູແລຍາດພີ່ນອງແບບທາງເລືອກທີ່ໄດຮັບອະນຸຍາດ (ARC)
- ເງິນຊວຍເຫຼືອສັດລ້ຽງສຳລັບໃຫບໍລິການ

State of California
**Health & Human Services Agency**
**Department of Social Services**

ແຜ່ນພັບນີ້ມີສະໜອງໃຫ້ທີ່ຫ້ອງການສະຫວັດດີການຂອງຄາວຕີ້ປະຈຳເຂດຂອງທານແລະຢູໃນເວັບໄຊ CDSS website ເປັນພາສາຕໍ່ໄປນີ້::

- ພາສາອາຫຼັບ
- ພາສາອາກເມນີ
- ພາສາກຳປູເຈຍ
- ພາສາຈີນ
- ພາສາຟາຊີ
- ພາສາມົ້ງ
- ພາສາຍີ່ປຸ່ນ
- ພາສາເກົາຫຼີ
- ພາສາລາວ
- ພາສາມ້ຽນ
- ພາສາປອກຕຸຍການ
- ພາສາປັນຈາບ
- ພາສາລັດເຊຍ
- ພາສາສະເປນ
- ພາສາຕາກາລອກ
- ພາສາຢູເຄຣນ
- ພາສາຫວຽດ

ແລະຍັງມີໄວ້ແຈກຈ່າຍຟຣີສຳລັບເອກະສານທີ່ພິມດ້ວຍຕົວອັກສອນຂະໜາດໃຫຍ, ອັກສອນເບຣລແລະຊີດີປະເພດສຽງ. ເອກະສານນີ້ອະທິບາຍກ່ຽວກັບສິດທິຂອງທານ, ວິທີການຂໍຄວາມຊວຍເຫຼືອດານພາສາຫຼືການອຳນວຍຄວາມສະດວກທີ່ ເໝາະສົມສຳລັບຜູມີຄວາມພິການ ຫຼືຄວາມບົກຜອງດ້ານຮາງກາຍ ແລະວິທີການຮອງຮຽນກ່ຽວກັບການເລືອກປະຕິບັດ.



# ສິດຂອງທານ

**ພາຍໃຕ້ໂຄງການສິດປະໂຫຍດສາທາລະນະ ຂອງລັດຄາລິຟໍເນຍ**



….. ສຳລັບຜູ້ທີ່ກຳລັງສະໝັກ ຫຼືໄດ້ຮັບ ການຊ່ວຍເຫຼືອສາທາລະນະໃນລັດຄາລິຟໍເນຍ

ກະລຸນາບອກພວກເຮົາຖ້າທ່ານຕ້ອງການຄວາມຊ່ວຊວຍເຫລືອຍອນຄວາມພິການ

ຂໍບໍລິການນາຍພາສາຟຣີ

ໜ່ວຍງານທີ່ໃຫ້ຄວາມຊ່ວຍເຫຼືອດ້ານສິດປະໂຫຍດສາທາລະນະມີໜາທີ່ປະຕິບັດຕາມກົດໝາຍຂອງລັດຖະບານກາງແລະຂອງລັດ ແລະບໍ່ສາມາດເລືອກປະຕິບັດ ກີດກັນ ຫຼື, ໃຫການຊວຍເຫຼືອ ໃຫສິດປະໂຫຍດຫຼືການບໍລິການອື່ນໆແກບຸກຄົນໃດໜຶ່ງທີ່ແຕກຕາງຈາກບຸກຄົນອື່ນໆ

**ສິດຂອງທ່ານ**

ເຈົ້າໜ້າທີ່ທຸກຄົນແລະອົງການຈັດຕັ້ງທີ່ໃຫ້ຄວາມຊ່ວຍເຫຼືອສາທາລະນະຕ້ອງເຄົາລົບສິດທິຂອງທ່ານ. ພວກເຂົາສາມາດຊ່ວຍທ່ານໃຫ້ເຂົ້າໃຈແລະສະໝັກເອົາສິດປະໂຫຍດແລະການບໍລິການຕ່າງໆ

- You have the right to an interpreter free of charge.
- .يحق لک الحصول على مترجم فوري مجاناً
- Դուք ունեք թարգմանչի իրավունք՝ անվճար
- អ្នកមានសិទ្ធិរកបានអ្នកបកប្រែ ដោយមិនអស់លុយ
- 您有權免費獲得口譯員。
- .شما حق دارید یک مترجم رایگان دریافت کنید
- आपको दुभाषिये की सेवाएँ मुफ़्त प्राप्त करने का अधिकार है।
- Koj yeej muaj cai mus siv ib tus kws txhaislus dawb.
- あなたは通訳サービスを無料で受ける権利を有されています。
- 귀하는 무료로 통역 서비스를 요청할 수 있는 법적 권리가 있습니다.
- ທ່ານມີສິດໄດ້ຮັບບໍລິການຈາກນາຍພາສາໂດຍບໍ່ເສຍຄ່າ
- Meih maaih leiz duqv zipv maiv zuqc cuotv nyaanh nyei faan waac mienh.
- Você tem o direito de solicitar um intérprete gratuitamente.
- ਤੁਹਾਡੇ ਕੋਲ ਮੁਫ਼ਤ ਵਿੱਚ ਦੁਭਾਸ਼ੀਏ ਦੀ ਸੇਵਾਵਾਂ ਪ੍ਰਾਪਤ ਕਰਨ ਦਾ ਅਧਿਕਾਰ ਹੈ।
- Вы имеете право на бесплатные услуги переводчика.
- Usted tiene derecho a servicios gratuitos de un intérprete.
- May karapatan ka sa isang tagasalin, nang walang bayad.
- ท่านมีสิทธิที่จะได้รับบริการจากล่ามแปลภาษาฟรี
- Ви маєте право на безкоштовні послуги перекладача.
- Bạn có quyền phiên dịch, miễn phí.

ກະລຸນາສອບຖາມໜ່ວຍງານທີ່ຮັບຜິດຊອບກ່ຽວກັບສິດປະໂຫຍດຫຼືການບໍລິການຂອງທ່ານເພື່ອຂໍຄວາມຊ່ວຍເຫຼືອດ້ານພາສາ.

**ທ່ານມີສິດທີ່ຈະ**:

1. ເຂົ້າໃຈວ່າເກີດຫຍັງຂຶ້ນກັບໃບສະໝັກ ຫຼືສິດປະໂຫຍດຂອງທ່ານ.
2. ໄດ້ຮັບຄຳອະທິບາຍເປັນລາຍລັກອັກສອນແລະທາງວາຈາ ກ່ຽວກັບໃບສະໝັກ ຫຼືສິດປະໂຫຍດຂອງທ່ານ. ທ່ານມີສິດທີ່ຈະໄດ້ຮັບບໍລິການຈາກນາຍພາສາຟຣີສຳລັບແປຂໍ້ມູນນີ້. ກະລຸນາສອບຖາມລາຍລະອຽດຈາກໜ່ວຍງານທີ່ຮັບຜິດຊອບຕໍ່ສິດປະໂຫຍດ/ການບໍລິການຂອງທ່ານສຳລັບການຊ່ວຍເຫຼືອດ້ານພາສາ.
3. ຖ້າໜ່ວຍງານຂອງລັດມີຄຳອະທິບາຍເປັນລາຍລັກອັກສອນເປັນພາສາອື່ນທີ່ບໍ່ແມ່ນພາສາອັງກິດ, ທ່ານມີສິດທີ່ຈະໄດ້ຮັບຂໍ້ມູນເຫຼົ່ານັ້ນ
4. ຂໍເອົາໃບຮັບເງິນສຳລັບເອກະສານທີ່ທ່ານນຳສົ່ງດ້ວຍມືຂອງທ່ານເອງ
5. ຂໍເບິ່ງບັນທຶກຂໍ້ມູນກໍລະນີຂອງທ່ານ
6. ກວດສອບກົດໝາຍແລະຂໍ້ບັງຄັບກ່ຽວກັບໂຄງການຂອງທ່ານ
7. ຂໍໃຫ້ຜູ້ພິພາກສາທົບທວນຄືນການດຳເນີນການ ຫຼືການລະເວັ້ນດຳເນີນການຂອງໜ່ວຍງານໃດໜຶ່ງໃນການປະຕິບັດໜ້າທີ່ກ່ຽວກັບສິດປະໂຫຍດ ສິດປະໂຫຍດ, ຫຼືການບໍລິການຂອງທ່ານ.
8. ບໍ່ຕ້ອງປະເຊີນກັບການເລືອກປະຕິບັດໃນການສະໝັກເພື່ອຂໍເອົາສິດປະໂຫຍດຫຼືການບໍລິການໃນໂຄງການ.
9. ຍື່ນຄຳຮ້ອງທຸກກ່ຽວກັບການເລືອກປະຕິບັດ.
10. ໄດ້ຮັບ"ການອຳນວຍຄວາມສະດວກທີ່ເໝາະສົມ" ຖ້າທ່ານມີຄວາມພິການຫຼືຄວາມບົກຜ່ອງ. ບໍລິການນີ້ແມ່ນຄວາມຊ່ວຍເຫຼືອພິເສດເພື່ອໃຫ້ທ່ານສາມາດເຂົ້າເຖິງຫຼືເຂົ້າຮ່ວມໃນໂຄງການໄດ້.
11. ໃຫ້ຂໍ້ມູນຂອງທ່ານຖືກເກັບເປັນຄວາມລັບ.
12. ໄດ້ຮັບການປະຕິບັດດ້ວຍຄວາມສຸພາບແລະດ້ວຍຄວາມເຄົາລົບ.

**ຖ້າທ່ານກຳລັງມີບັນຫາເລື່ອງສິດປະໂຫຍດຫຼືບໍລິການຕ່າງໆ**:

**ເກັບບັນທຶກຂໍ້ມູນ** ເອກະສານແລະການຕິດຕໍ່ພົວພັນທັງໝົດຂອງທ່ານທີ່ໄດ້ເຮັດກັບໜ່ວຍງານ.

**ຂໍເອົາໃບຮັບເງິນ** ເມື່ອທ່ານນຳສົ່ງເອກະສານໃດໜຶ່ງ

**ພາບຸກຄົນອື່ນ** ໄປກັບທ່ານເມື່ອນຳທ່ານໄປປະຊຸມກັບໜ່ວຍງານ

**ການຮ້ອງຮຽນ** ສາມາດເຮັດໄດ້ 4 ວິທີ ດັ່ງຕໍ່ໄປນີ້:

<u>**ບໍ່ເປັນທາງການ**:</u> ທ່ານສາມາດຂໍເວົ້າກັບຫົວໜ້າຄຸມງານເພື່ອເວົ້າກ່ຽວກັບບັນຫາກັບເຈົ້າໜ້າທີ່ ຫຼືເພື່ອກວດສອບກົດລະບຽບແລະການດຳເນີນການກ່ຽວກັບສິດປະໂຫຍດຫຼືການບໍລິການຂອງທ່ານ.

<u>**ການໄຕ່ສວນຈາກລັດ**:</u> ກະລຸນາຮ້ອງຂໍໃຫ້ມີການໄຕ່ສວນຈາກລັດຖ້າທ່ານບໍ່ເຫັນດີນຳກັບການດຳເນີນການ ຫຼືການລະເວັ້ນດຳເນີນການຂອງໜ່ວຍງານທີ່ປະຕິບັດການກ່ຽວກັບສິດປະໂຫຍດຫຼືການບໍລິການຂອງທ່ານ. ທ່ານຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຈາກລັດພາຍໃນ 90 ວັນນັບຈາກວັນທີໜ່ວຍງານແຈ້ງການກ່ຽວກັບສິດປະໂຫຍດຫຼືການບໍລິການ. ຖ້າທ່ານຮ້ອງຂໍການໄຕ່ສວນຈາກລັດພາຍຫຼັງ 90 ວັນ, ຜູ້ພິພາກສາຈະຕ້ອງພິຈາລະນາວ່າທ່ານມີເຫດຜົນທີ່ດີໃນການຮ້ອງຂໍຊ້າເກີນກຳນົດຫຼືບໍ່ ເຊັ່ນຄວາມເຈັບປ່ວຍຫຼືຄວາມພິການ.

<u>**ການຮ້ອງຮຽນເລື່ອງການເລືອກປະຕິບັດ**:</u> ກະລຸນາເບິ່ງພາກສ່ວນການຮ້ອງຮຽນກ່ຽວກັບການເລືອກປະຕິບັດໃນແຜ່ນພັບນີ້

<u>**ການຮ້ອງທຸກ**:</u> ທ່ານສາມາດຍື່ນຄຳຮ້ອງກັບໜ່ວຍງານຂອງລັດຖ້າໜ່ວຍງານນັ້ນມີກົດລະບຽບໃນການຮ້ອງທຸກ.

<u>**ການຮ້ອງທຸກນີ້ບໍ່ເປັນການຄຸ້ມຄອງສິດຂອງທ່ານໃນລັກສະນະດຽວກັນກັບການຂໍໃຫ້ມີການໄຕ່ສວນຈາກລັດ.**</u>

**ການໄຕ່ສວນຈາກລັດ**

ທ່ານຍັງສາມາດຂໍໃຫ້ມີການໄຕ່ສວນຈາກລັດຖ້າໜ່ວຍງານຂອງລັດບໍ່ໃຫ້ສິດປະໂຫຍດຫຼືການບໍລິການທີ່ທ່ານຄິດວ່າທ່ານຄວນຈະໄດ້ຮັບ. ກະລຸນາເບິ່ງ PUB 412 ສຳລັບຂໍ້ມູນກ່ຽວກັບການໄຕ່ສວນຈາກລັດ.

<u>**ຖ້າບັນຫາຂອງທ່ານແມ່ນກ່ຽວກັບການຊ່ວຍເຫຼືອທົ່ວໄປ**</u>

ຫຼື ການບັນເທົາທຸກທົ່ວໄປ ທ່ານຈະຕ້ອງຮ້ອງຂໍໃຫ້ມີການໄຕ່ສວນຈາກຄາວຕີ້

<u>**ຖ້າບັນຫາຂອງທ່ານແມ່ນກ່ຽວກັບສະຫວັດດີການປະກັນສັງຄົມ**</u>

ທ່ານຕ້ອງຕິດຕໍ່ຫາຫ້ອງການປະກັນສັງຄົມ.

**ການຮ້ອງຂໍໃຫ້ມີການໄຕ່ສວນຈາກລັດ**

<u>ລະບົບການຈັດການຄະດີອຸທອນທາງອອນລາຍ</u> – ທ່ານສາມາດສ້າງບັນຊີເພື່ອໃຫ້ທ່ານໄດ້ຮັບຂໍ້ມູນການອຸທອນທັງໝົດຂອງທ່ານທາງອອນລາຍ ຫຼືທ່ານສາມາດຮ້ອງຂໍການອຸທອນໂດຍບໍ່ຕ້ອງມີບັນຊີກໍ່ໄດ້

| | |
|---|---|
| ເບີໂທລະສັບ: | 1-800-743-8525 |
| ອີເມວ: | SHDCSU@dss.ca.gov |
| ເບີແຟັກ: | 833-281-0905 |
| ທີ່ຢູ່ທາງໄປສະນີ: | State Hearings Division<br>PO Box 944243, MS 21-37<br>Sacramento, CA 94244-2430 |

**ການໄຕ່ສວນແບບເລັ່ງລັດ**

ຖ້າທ່ານມີບັນຫາຮີບດ່ວນ, ທ່ານສາມາດຂໍໃຫ້ມີການໄຕ່ສວນ"ແບບເລັ່ງລັດ" ເພື່ອໃຫ້ມີການໄຕ່ສວນໄວວາຂຶ້ນ.

ສຳລັບກໍລະນີເມດີ-ແຄລ, ການດຳເນີນການນີ້ແມ່ນຊ່ວຍໄດ້ໃນກໍລະນີການນັດໄຕ່ສວນຕາມປົກກະຕິອາດຈະເປັນອັນຕະລາຍຕໍ່ຊີວິດຢ່າງຮຸນແຮງ ບໍ່ວ່າຈະຕໍ່ສຸຂະພາບຮ່າງກາຍຫຼືຈິດໃຈ.

**ການເລືອກປະຕິບັດທີ່ຫ້າມກະທຳ**

ພາຍໃຕ້ກົດໝາຍຂອງລັດ, ໜ່ວຍງານຕ່າງໆບໍ່ສາມາດປະຕິເສດການໃຫ້ສິດປະໂຫຍດຫຼືການບໍລິການ ຫຼືໃຫ້ການຊ່ວຍເຫຼືອທ່ານທີ່ແຕກຕ່າງຈາກການຊ່ວຍເຫຼືອທີ່ສະໜອງໃຫ້ກັບຜູ້ອື່ນໂດຍອີງຕາມ:

ເຊື້ອຊາດ, ສີຜິວ, ບັນພະບຸລຸດ, ຊາດກຳເນີດ (ລວມທັງພາສາ), ເອກະລັກກຸ່ມຊົນເຜົ່າ, ອາຍຸ, ຄວາມພິການທາງຮ່າງກາຍຫຼືຈິດໃຈ, ສະພາບທາງການແພດ, ສາດສະໜາ, ເພດ, ເພດສະພາບ, ລັກສະນະທາງເພດ, ອັດຕະລັກທາງເພດ, ລົດນິຍົມທາງເພດ, ສະຖານະພາບສົມລົດ, ການຢູ່ນຳກັນໂດຍບໍ່ໄດ້ແຕ່ງງານ, ຄວາມກ່ຽວຂ້ອງພົວພັນກັບພັກການເມືອງ, ພົນລະເມືອງ, ສະຖານະພາບການເຂົ້າເມືອງ, ແລະຂໍ້ມູນທາງພັນທຸກຳ.

ກົດໝາຍຂອງລັດຖະບານກາງຍັງຫ້າມການເລືອກປະຕິບັດໂດຍອີງຕາມພື້ນຖານຫຼາຍຢ່າງ ເຖິງແມ່ນວ່າຈະບໍ່ໄດ້ລະບຸໄວ້ຂ້າງເທິງ. ກົດໝາຍລັດຖະບານກາງຍັງຫ້າມ:

ການເຮັດໃຫ້ຊັກຊ້າຫຼືປະຕິເສດການຮັບເດັກນ້ອຍເປັນລູກບຸນທຳ ໂດຍອີງໃສ່ເຊື້ອຊາດ, ສີຜິວ, ຫຼືຊາດກຳເນີດຂອງພໍ່ແມ່ບຸນທຳຫຼືພໍ່ແມ່ອຸປະຖຳ ຫຼືຂອງເດັກນ້ອຍເອງ;

ຫ້າມປະຕິເສດບໍ່ໃຫ້ບຸກຄົນໃດໜຶ່ງເປັນພໍ່ແມ່ອຸປະຖຳຫຼືພໍ່ແມ່ບຸນທຳໂດຍອີງໃສ່ເຊື້ອຊາດ, ສີຜິວ, ຫຼືຊາດກຳເນີດຂອງພໍ່ແມ່ບຸນທຳຫຼືພໍ່ແມ່ອຸປະຖຳ ຫຼືຂອງເດັກນ້ອຍຜູ້ກ່ຽວ.

**ຕົວຢ່າງການເລືອກປະຕິບັດ**

ໜ່ວຍງານບໍ່ມີນາຍພາສາໃຫ້ບໍລິການຟຣີ.

ເຈົ້າໜ້າທີ່ແຈ້ງໃຫ້ກຸ່ມຊາດພັນບາງກຸ່ມຊາບກ່ຽວກັບໂຄງການແລະບໍລິການຕ່າງໆຫຼາຍກວ່າຄົນກຸ່ມຊາດພັນອື່ນ.

ໜ່ວຍງານຈະບໍ່ຊ່ວຍຫາຂໍ້ມູນທີ່ເປັນຕົວອັກສອນຂະໜາດໃຫຍ່ຫຼືອັກສອນເບຣລໃຫ້ທ່ານເພື່ອຊ່ວຍເຫຼືອທ່ານເຊິ່ງເປັນຜູ້ມີຄວາມບົກຜ່ອງທາງສາຍຕາ.

ເຈົ້າໜ້າທີ່ຮູ້ກ່ຽວກັບສາດສະໜາ ຫຼືລົດນິຍົມທາງເພດຂອງທ່ານແລ້ວປະຕິບັດຕໍ່ທ່ານແຕກຕ່າງອອກໄປ.

ທ່ານບໍ່ສາມາດໄປບ່ອນນັດໝາຍໄດ້ຍ້ອນອາຄານຂອງໜ່ວຍງານບໍ່ມີລິບ ແລະທ່ານມີຄວາມພິການທີ່ຈຳກັດຄວາມສາມາດຂອງທ່ານໃນການຂຶ້ນບັນໄດ.

ທ່ານບໍ່ສາມາດເອົາລົດເຂັນເຂົ້າໄປຫ້ອງກວດ ຫ້ອງສຳພາດ ຫຼືຫ້ອງນ້ຳໄດ້.

ໜ່ວຍງານບໍ່ຕ້ອງການໃຫ້ທ່ານໄດ້ຮັບການຝຶກແອບ ຍ້ອນເຈົ້າໜ້າທີ່ບອກວ່າທ່ານ "ອາຍຸຫຼາຍເກີນໄປ".

**ການອຳນວຍຄວາມສະດວກທີ່ເໝາະສົມ**:
**ຄວາມຊ່ວຍເຫຼືອພິເສດສຳລັບບຸກຄົນທີ່ມີຄວາມພິການ**

ບຸກຄົນມີຄວາມພິການທາງຮ່າງກາຍຫຼືຈິດໃຈອາດມີສິດໄດ້ຮັບການອຳນວຍຄວາມສະດວກທີ່ເໝາະສົມຟຣີຈາກໜ່ວຍງານຂອງລັດເພື່ອຊ່ວຍໃຫ້ພວກເຂົາສາມາດເຂົ້າເຖິງແລະເຂົ້າຮ່ວມໃນໂຄງການຕ່າງໆໄດ້. ຖ້າທ່ານມີຄວາມພິການແລະຕ້ອງການຄວາມຊ່ວຍເຫຼືອພິເສດ ທ່ານຄວນຈະສອບຖາມໜ່ວຍງານທ້ອງຖິ່ນຫຼືໜ່ວຍງານຂອງລັດທີ່ປະຕິບັດໜ້າທີ່ຮັບຜິດຊອບໃນສະໝັກ ຫຼືສິດປະໂຫຍດຫຼືການບໍລິການຂອງທ່ານ. ໜ່ວຍງານນັ້ນຈະຕ້ອງເຮັດວຽກຮ່ວມກັບທ່ານເພື່ອພິຈາລະນາວ່າທ່ານຕ້ອງການຄວາມຊ່ວຍເຫຼືອຫຍັງແດ່ ຖ້າໜ່ວຍງານປະຕິເສດທີ່ຈະອຳນວຍຄວາມສະດວກໃຫ້ກັບທ່ານ ໜ່ວຍງານນັ້ນຈະຕ້ອງແຈ້ງໃຫ້ທ່ານຊາບເປັນລາຍລັກອັກສອນໂດຍລະບຸເຫດຜົນໃນການປະຕິເສດການໃຫ້ຄວາມຊ່ວຍເຫຼືອກັບທ່ານ. ໜັງສືແຈ້ງການຈະຕ້ອງມີລາຍລະອຽດກ່ຽວກັບສິດຂອງທ່ານໃນການອຸທອນ.